**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄຳໄຊ

ພະແນກສຶກສາທິການ ແລະ ກິລາແຂວງ ເລກທີ 665 /ສກຂ

ບໍລິຄຳໄຊ, ວັນທີ 15 ພຶດສະພາ 2026

# ຫນັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນເປີດກວ້າງພາຍໃນ

1. **ພະແນກສຶກສາທິການ ແລະ ກິລາ ແຂວງບໍລິຄຳໄຊໄດ້ຮັບອະນຸມັດງົບປະມານ ຈາກແຜນການລົງທຶນຂອງລັດອະນຸມັດ** ປີ 2026 ເພື່ອກໍ່ສ້າງ ຫໍພັກນັກຮຽນຊາຍຫ້ອງພອນສະຫວັນ ຕາມການອະນຸມັດງົບປະມານຕາມແຜນການລົງທຶນຂອງລັດຂຶ້ນກັບ ແຂວງບໍລິຄຳໄຊ ປະຈຳປີ 2026 ມີດັ່ງນີ້ :

   - ຂະແໜງບໍລິຫານ-ການເງິນ ພະແນກສຶກສາທິການ ແລະ ກິລາແຂວງ ບໍລິຄຳໄຊ ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ;

2. **ພະແນກສຶກສາທິການ ແລະ ກິລາແຂວງ ບໍລິຄຳໄຊ** ຂໍເຊີນບັນດາບໍລິສັດກໍ່ສ້າງທີ່ສົນໃຈ ແລະ ມີຄວາມເຫມາະສົມເຂົ້າຍື່ນຊອງປະມູນ ສຳລັບ ໂຄງການດັ່ງກ່າວມາຂ້າງເທິງ ຕັ້ງຢູ່ ບ້ານ ສີສະອາດ ເມືອງ ປາກຊັນ ແຂວງ ບໍລິຄຳໄຊ ໄລຍະການ ກໍ່ສ້າງແມ່ນ 24 ເດືອນ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ;

3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ສະບັບເລກທີ 30 /ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍການຈັດຊື້-ຈັດຈ້າງ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;

4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດກໍ່ສ້າງໃນຂອບເຂດທົ່ວປະເທດ ທີ່ມີຄວາມເຫມາະສົມ, **ມີໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ ຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບວຽກ ທີ່ຈະດຳເນີນການກໍ່ສ້າງ, ຕ້ອງມີຖານະການເງິນພຽງພໍ ( ສາມາດລົງທຶນກ່ອນໃຫ້ສຳເລັດ100% ), ມີປະສົບການວຽກກໍ່ສ້າງ ແລະ ຕ້ອງມີວິຊາການປະຈຳສະໜາມກໍ່ສ້າງທີ່ມີປະສົບການ 3 ປີ ຂຶ້ນໄປ ຈຳນວນ 1 ຄົນຂຶ້ນໄປ;**

5. ບໍລິສັດທີ່ມີຄວາມເຫມາະສົມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ **ພະແນກສຶກສາທິການ ແລະ ກິລາແຂວງບໍລິຄຳໄຊ, ຂະແໜງບໍລິຫານ-ການເງິນ (ຜູ້ຮັບຜິດຊອບວຽກກໍ່ສ້າງພື້ນຖານໂຄງລ່າງ) ໂທລະສັບ: 020 22338417 ແລະ 020** 57249660 ແລະ ຂະແໜງການຈັດຊື້-ຈັດຈ້າງ ພະແນກການເງິນແຂວງ ໂທລະສັບ: 020 28870055 ກວດກາເບິ່ງເອກະສານປະມູນໄດ້ ຕາມທີ່ຢູ່ຂ້າງເທິງໃນໂມງລັດຖະການ.

6. ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດ ສາມາດຊື້ໄດ້ ເລີ້ມແຕ່ວັນທີ 15 ພຶດສະພາ 2026 ເປັນຕົ້ນໄປ, ໃນ



Scanned with CamScanner

ລາ ຄາ **500.000 ກີບ** (ຫ້າແສນກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ.

7. ຊອງປະມູນຄົບຊຸດຕ້ອງສົ່ງທີ່ **ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາ ແຂວງບໍລິຄຳໄຊ ໃນວັນທີ 25 ມີຖຸນາ 2026 , ເວລາ 9 :0 0 ໂມງ**. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການ ເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ **9:20 ໂມງ, ຂອງວັນທີ 25 ມີຖຸນາ 2026, ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາແຂວງບໍລິຄຳໄຊ** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

8. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນມາພ້ອມ ໃນມູນຄ່າບໍ່ໃຫ້ຫລຸດ **2% ຂອງມູນຄ່າປະມູນ**. ໜັງສືຄ້ຳປະກັນການປະມູນ ຕ້ອງແມ່ນໜັງສືຄ້ຳປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບ ຟອມທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນ.

**ຮ. ຫົວໜ້າພະແນກ**

ພະແນກ ສຶກສາທິການ ແລະກິລາ ແຂວງບໍລິຄຳໄຊ

ຄຳເພັດ ໄຊປັນຍາ
Mr Khamphet XAYPANYA

ຕິດຕໍ່ພົວພັນ.

- ທ່ານ ວຽງທອງ ໄຊຍະວົງ 020 22338417
- ທ່ານ ກັນຍາ ແສງມະນີ 020 57249660
- ທ່ານ ຄຳປະເສີດ ພັນນະວົງ ຂະແໜງການຈັດຊື້-ຈັດຈ້າງ ພະແນກການເງິນແຂວງ 02028670055



Scanned with CamScanner